# ທຫລ ສໍາເລັດການເປັນປະທານຮ່ວມກອງປະຊຸມຄະນະກໍາມະການລະດັບສູງວຽກງານການເຊື່ອມໂຍງຂະແໜງການເງິນອາຊຽນ (Senior Level Committee: SLC) ຄັ້ງທີ 26, ທີ່ ບາຫຼີ, ປະເທດ ອິນໂດເນເຊຍ




ໃນວັນທີ 02 ສິງຫາ 2023, ຄະນະນໍາຂອງ ທະນາຄານແຫ່ງ ສປປ ລາວ (ທຫລ) ນໍາໂດຍ ທ່ານ ນ. ວັດທະນາ ດາລາລອຍ, ຮອງຜູ້ວ່າການ ທຫລ ໄດ້ສໍາເລັດການເປັນປະທານຮ່ວມກັບ ທ່ານ Leong Sing Chiong, ຮອງຜູ້ວ່າການ ທະນາຄານກາງ ສິງກະໂປ (ທສປ) ໃນກອງປະຊຸມຄະນະກໍາມະການລະດັບສູງວຽກງານການເຊື່ອມໂຍງຂະແໜງການເງິນອາຊຽນ (ASEAN Senior Level Committee on Financial Integration: SLC) ຄັ້ງທີ 26, ທີ່ ບາຫຼີ, ປະເທດ ອິນໂດເນເຊຍ ໂດຍມີຜູ້ຕາງໜ້າຈາກ 10 ທະນາຄານກາງຂອງປະເທດສະມາຊິກອາຊຽນ ແລະ ທະນາຄານກາງ ຕີມໍ ເລສເຕ ໃນນາມເປັນຜູ້ສັງເກດການ, ກອງເລຂາອາຊຽນ(ASEC), ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງຄື: ອົງການຄົ້ນຄວ້າເສດຖະກິດມະຫາພາກອາຊຽນ+3 (AMRO), ຫ້ອງການຜູ້ຕາງໜ້າ Glasgow for Net Zero (GFANZ), ແລະ ທະນາຄານພັດທະນາອາຊີ (ADB).

ກອງປະຊຸມ SLC ຈັດຂຶ້ນເປັນວາລະປົກກະຕິ 02 ຄັ້ງຕໍ່ປີ ແລະ ເປັນພັນທະຂອງ ທຫລ ຕ້ອງໄດ້ເຂົ້າຮ່ວມເພື່ອປຶກສາຫາລືກ່ຽວກັບແຜນວຽກບູລິມະສິດປະຈໍາປີ ແລະ ແຜນຍຸດທະສາດຫຼັກໃນການເພີ່ມທະວີຄວາມເຂັ້ມແຂງທາງດ້ານການເງິນໃນພາກພື້ນ. ທີ່ປະຊຸມໄດ້ຮັບຟັງການລາຍງານຈາກອົງການຄົ້ນຄວ້າເສດຖະກິດມະຫາພາກອາຊຽນ+3 (AMRO) ກ່ຽວກັບລະດັບການເຕີບໂຕ GDP ຂອງອາຊຽນຢູ່ທີ່ 4.6% (2023) ທຽບໃສ່ປີ 2022 ແມ່ນຂ້ອນຂ້າງຊະລໍຕົວ ເນື່ອງຈາກຜົນກະທົບຈາກປັດໄຈພາຍນອກຊຶ່ງກະທົບຕໍ່ກັບເສດຖະກິດການເງິນຂອງໂລກ ແລະ ພາກພື້ນ. ພ້ອມ

ນີ້, GFANZ ເປັນຄັ້ງທຳອິດທີ່ໄດ້ຖືກເຊີນເພື່ອນຳສະເໜີກ່ຽວກັບແຜນການປະຕິບັດການຫັນປ່ຽນທາງດ້ານການເງິນສີຂຽວ (Net Zero Transition plans) ໃນອາຊຽນ ຊຶ່ງບັນດາທະນາຄານກາງອາຊຽນ ໄດ້ຊຸກຍູ້ຢ່າງເຕັມທີ່ໃນຂົງເຂດການຫັນປ່ຽນດ້ານການເງິນສີຂຽວ ແລະ ມາດຕະການການເງິນແບບຍືນຍົງ ສະແດງໃຫ້ເຫັນເຖິງຄວາມສຳຄັນຂອງອາຊຽນກ່ຽວກັບການໃຫ້ຄວາມສຳຄັນດ້ານຂໍ້ລິເລີ່ມດ້ານການເງິນແບບຍືນຍົງທີ່ໄດ້ປະຕິບັດໂດຍບັນດາປະເທດສະມາຊິກອາຊຽນໂດຍສະເພາະໜ່ວຍງານການເງິນຍືນຍົງພາຍໃຕ້ຄະນະ SLC (Task Force on Sustainable Finance).

ນອກຈາກນັ້ນ, ທີ່ປະຊຸມຍັງໄດ້ຮັບຊາບຄວາມຄືບໜ້າ ແລະ ແຜນການຈັດຕັ້ງປະຕິບັດຕາມບົດລາຍງານຂອງຄະນະກຳມະການທັງໝົດ (Working Committees) ແລະ ໜ່ວຍງານຕ່າງໆ (Task Force) ພາຍໃຕ້ຄະນະກຳມະການ SLC ຊຶ່ງໄດ້ເນັ້ນໜັກເຖິງຄວາມພະຍາຍາມຂອງອາຊຽນໃນການຊຸກຍູ້ໃຫ້ວຽກງານການເງິນ-ທະນາຄານ ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດເຊື່ອມໂຍງເຂົ້າກັນຫຼາຍຂຶ້ນໃນທ່າມກາງສະພາບການເໜັງຕີງ ແລະ ຄວາມບໍ່ແນ່ນອນຂອງການເງິນໃນໂລກ.

ພ້ອມດຽວກັນນີ້, ບັນດາທ່ານຮອງຜູ້ວ່າການ ແລະ ຜູ້ຕາງໜ້າຈາກທະນາຄານກາງ 10 ປະເທດອາຊຽນ ໄດ້ເຫັນດີຮ່ວມກັນໃນການຮັບຮອງເອົາແຜນວຽກສະເໜີໂດຍບັນດາຄະນະກຳມະການ ແລະ ໜ່ວຍງານຕ່າງໆພາຍໃຕ້ຄະນະກຳມະການ SLC ລວມທັງການສືບຕໍ່ແຜນກະກຽມກຳນົດທິດທາງໃນການທົບທວນຄືນກ່ຽວກັບແຜນວຽກຍຸດທະສາດຫຼັກໃນຂະແໜງການທະນາຄານພາຍໃຕ້ເສົາຄ້ຳປະຊາຄົມເສດຖະກິດອາຊຽນ (AEC) ເພື່ອກະກຽມແຜນພາຍຫຼັງປີ 2025 ແລະ ການຊຸກຍູ້ຄວາມເຂັ້ມແຂງດ້ານເງິນ-ທະນາຄານໃນອາຊຽນໃຫ້ຢູ່ໃນລະດັບທີ່ໝັ້ນຄົງ. ທີ່ປະຊຸມໄດ້ເຫັນດີຮ່ວມກັນສືບຕໍ່ປຶກສາຫາລືກ່ຽວກັບການສະເໜີຂໍ້ລິເລີ່ມຂອງ ປະເທດ ອິນໂດເນເຊຍ ໃນການສ້າງໜ່ວຍງານການປັບປຸງພາລະບົດບາດຄະນະກຳມະການຕ່າງໆ (Task Force on Revisiting WCs TOR) ໃນກອງປະຊຸມລະດັບສູງລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງອາຊຽນ ຊຶ່ງຈະຈັດຂຶ້ນໃນວັນທີ 25 ສິງຫາ 2023 ທີ່ ຈາກາຕາ ປະເທດ ອິນໂດເນເຊຍ.

ກອງປະຊຸມ SLC ຄັ້ງທີ 26 ໄດ້ດຳເນີນເປັນເວລາ 01 ມື້ເຕັມ ດ້ວຍບັນຍາກາດອັນຟົດຟື້ນ ແລະ ເຕັມໄປດ້ວຍຜົນສຳເລັດ. ໃນທ້າຍກອງປະຊຸມ, ທ່ານ ຮອງຜູ້ວ່າການ ທຫລ ໄດ້ກ່າວສະແດງຄວາມຕ້ອນຮັບບັນດາປະເທດສະມາຊິກອາຊຽນ ໃນນາມ ສປປ ລາວ ຈະເປັນເຈົ້າພາບຈັດກອງປະຊຸມອາຊຽນໃນປີ 2024 ຊຶ່ງໄດ້ແຈ້ງໃຫ້ທີ່ປະຊຸມຮັບຊາບກ່ຽວກັບ ວັນທີ ແລະ ສະຖານທີ່ ກອງປະຊຸມ SLC ຄັ້ງທີ 27 ຄາດວ່າຈະຈັດຂຶ້ນໃນລະຫວ່າງທ້າຍເດືອນ ກຸມພາ 2024 ທີ່ ສປປ ລາວ.

ຂ່າວ ແລະ ພາບໂດຍ: ພະແນກຮ່ວມມືຫຼາຍຝ່າຍ, ກົມຮ່ວມມືສາກົນ

*ຄົນລາວຮັກເມືອງລາວໃຊ້ເງິນກີບລາວ*